**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ                                                  ເລກທີ 0851/ອຄ

ນະຄອນຫຼວງວຽງຈັນ, ວັນທີ 14 ກັນຍາ 2021

# ຂໍ້ຕົກລົງ
# ວ່າດ້ວຍ ການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ວັນທີ 24 ກໍລະກົດ 2017.
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ສະບັບເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016.
- ອີງຕາມ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີກ່ຽວກັບທິດຊີ້ນຳໃນການປັບປຸງນິຕິກຳກົນໄກການປະຕິບັດ ແລະ ການເກັບລາຍຮັບຈາກໄມ້ ແລະ ຜະລິດຕະພັນໄມ້ ສະບັບເລກທີ 885/ຫສນຍ, ລົງວັນທີ 28 ກໍລະກົດ 2021.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ມາດຕາ 1 ລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ

ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກດັ່ງນີ້:

1. ລາຍການຜະລິດຕະພັນໄມ້ປູກ ເພື່ອສົ່ງອອກ (ເອກະສານຊ້ອນທ້າຍ 1);
2. ລາຍການຜະລິດຕະພັນໄມ້ທຳມະຊາດ ເພື່ອສົ່ງອອກ “ໄມ້ໃນບັນຊີ I, II ແລະ III” (ເອກະສານຊ້ອນທ້າຍ 2);
3. ລາຍການຜະລິດຕະພັນຫວາຍ ແລະ ໄມ້ປ່ອງ ເພື່ອສົ່ງອອກ (ເອກະສານຊ້ອນທ້າຍ 3);
4. ລາຍການຜະລິດຕະພັນໄມ້ທຳມະຊາດ ເພື່ອສົ່ງອອກ ສະເພາະ “ໄມ້ໃນບັນຊີ II ແລະ III” (ເອກະສານຊ້ອນທ້າຍ 4).

## ມາດຕາ 2 ການກຳນົດໄມ້ໃນບັນຊີ I, II ແລະ III

ການກຳນົດໄມ້ໃນບັນຊີ I, II ແລະ III ໃຫ້ປະຕິບັດຕາມ ທີ່ກຳນົດໄວ້ ໃນຂໍ້ຕົກລົງກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການກຳນົດບັນຊີໄມ້ I, II ແລະ III ສະບັບເລກທີ 0448/ປມ, ລົງວັນທີ 06 ເມສາ 2021.

**ມາດຕາ 3 ການເກັບຄ່າຊັກພິເສດ ແລະ ຂັ້ນຕອນການສົ່ງອອກ**

ການເກັບຄ່າຊັກພິເສດຈາກການສົ່ງອອກຜະລິດຕະພັນໄມ້ ໃຫ້ປະຕິບັດຕາມແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 885/ຫສນຍ, ລົງວັນທີ 28 ກໍລະກົດ 2021 ດັ່ງນີ້:

1. ການສົ່ງອອກຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ລວມທັງ ໄມ້ຊິ້ນສ່ວນຂອງເຟີນີເຈີພຽງຢ່າງດຽວ ເຊັ່ນ: ຂາໂຕະ, ຂາຕັ່ງ ແລະ ອື່ນໆ ຕາມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 2 ແລະ 4 ຂອງຂໍ້ຕົກລົງສະບັບນີ້ ໃຫ້ເສຍຄ່າຊັກພິເສດ ໃນອັດຕາ 15%.
2. ການສົ່ງອອກໄມ້ເລື່ອຍແປຮູບ (ໄມ້ຕີຕັບ, ໄມ້ເລື່ອຍ ແລະ ໄມ້ຊອຍ) ໃຫ້ປະຕິບັດຕາມແຈ້ງການສະເພາະຂອງລັດຖະບານ.

ຂັ້ນຕອນໃນການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ກົມການນຳເຂົ້າ ແລະ ສົ່ງອອກ ເຜີຍແຜ່ໃຫ້ພາກສ່ວນກ່ຽວຂ້ອງ ແລະ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຮັບຊາບ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້.

ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນບັງຄັບໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ ນຳໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ສະບັບເລກທີ 0939/ອຄ.ກອຫ, ລົງວັນທີ 01 ສິງຫາ 2019.

**ລັດຖະມົນຕີ**

ປອ.ຄຳແພງ ໄຊສົມແພງ

# ສາລະບານ

ເອກະສານຊ້ອນທ້າຍ 1: ລາຍການຜະລິດຕະພັນໄມ້ປູກ ເພື່ອສົ່ງອອກ ..... 2

1.1. ໄມ້ປູກທຸກຊະນິດ ..... 2

1.2. ໄມ້ປູກຊະນິດໃຫ້ໝາກ ..... 2

ເອກະສານຊ້ອນທ້າຍ 2: ລາຍການຜະລິດຕະພັນໄມ້ທຳມະຊາດ ເພື່ອສົ່ງອອກ (ໄມ້ໃນບັນຊີ I, II ແລະ III) ..... 3

1. ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ ..... 3

2. ຜະລິດຕະພັນຖ່ານໄມ້ ..... 3

3. ຜະລິດຕະພັນໄມ້ປັກເກ້ ແລະ ໄມ້ປູພື້ນ ..... 3

4. ຜະລິດຕະພັນໄມ້ອັດ ..... 4

5. ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້ ..... 4

6. ຜະລິດຕະພັນໄມ້ປະກອບໃນອາຄານ ..... 4

7. ເຄື່ອງຫັດຖະກຳ ທີ່ເຮັດດ້ວຍໄມ້ ..... 5

8. ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້ ..... 6

ເອກະສານຊ້ອນທ້າຍ 3: ລາຍການຜະລິດຕະພັນຫວາຍ ແລະ ໄມ້ປ່ອງ ເພື່ອສົ່ງອອກ ..... 7

1.1 ຜະລິດຕະພັນຫວາຍ ..... 7

1.2 ຜະລິດຕະພັນໄມ້ປ່ອງ ..... 7

ເອກະສານຊ້ອນທ້າຍ 4: ລາຍການຜະລິດຕະພັນໄມ້ ທຳມະຊາດ ເພື່ອສົ່ງອອກ
(ສະເພາະ ໄມ້ໃນບັນຊີ II ແລະ III ເທົ່ານັ້ນ) ..... 8

1. ໄມ້ປອກ/ໄມ້ຝານ ..... 8

3. ໄມ້ປະກອບໃນອາຄານ (ຊິ້ນສ່ວນ) ..... 8

ລາຍການຜະລິດຕະພັນໄມ້ ທຳມະຊາດ ເພື່ອສົ່ງອອກ (ສະເພາະ ໄມ້ໃນບັນຊີ II ແລະ III ເທົ່ານັ້ນ) ..... 10

ໝາຍເຫດ: ..... 10

ຮູບພາບ 1: ລາຍການຜະລິດຕະພັນໄມ້ປູກ ເພື່ອສົ່ງອອກ ..... 11

ຮູບພາບ 2: ລາຍການຜະລິດຕະພັນໄມ້ ທຳມະຊາດ ເພື່ອສົ່ງອອກ (ໄມ້ໃນບັນຊີ I, II ແລະ III) ..... 12

ຮູບພາບ 3: ລາຍການຫວາຍ ແລະ ໄມ້ປ່ອງ ເພື່ອສົ່ງອອກ ..... 22

ຮູບພາບ 4: ລາຍການຜະລິດຕະພັນໄມ້ ທຳມະຊາດ ເພື່ອສົ່ງອອກ (ສະເພາະ ໄມ້ໃນບັນຊີ II ແລະ III ເທົ່ານັ້ນ) ..... 23

# ລາຍການຜະລິດຕະພັນໄມ້ເພື່ອສົ່ງອອກ (ສະບັບປັບປຸງ)

| ເອກະສານຊ້ອນທ້າຍ 1: ລາຍການຜະລິດຕະພັນໄມ້ປູກ ເພື່ອສົ່ງອອກ |
| --- |
| **1.1. ໄມ້ປູກທຸກຊະນິດ**<br>ສາມາດສົ່ງອອກໄດ້ໃນທຸກຮູບແບບທີ່ມີການປຸງແຕ່ງ ຫຼື ບໍ່ມີການປຸງແຕ່ງ ກໍ່ໄດ້, ແຕ່ຕ້ອງມີການຂຶ້ນທະບຽນສວນປູກ ຫຼື ໃບຢັ້ງຢືນສວນປູກ ຈາກຂະແໜງກະສິກຳ ແລະ ປ່າໄມ້. |
| **1.2. ໄມ້ປູກຊະນິດໃຫ້ໝາກ**<br>ໄມ້ປູກຊະນິດໃຫ້ໝາກ ເຊັ່ນ: ຕົ້ນມີ້, ຕົ້ນຂາມ, ຕົ້ນມ່ວງ ແລະ ຕົ້ນໄມ້ໃຫ້ໝາກຊະນິດອື່ນໆ ທີ່ປະຊາຊົນໄດ້ປູກ ແລະ ປົກປັກຮັກສາມາເປັນເວລາດົນນານແລ້ວ ທີ່ມີຈຸດປະສົງຕັດ ແລະ ສົ່ງອອກ ໃຫ້ປະຕິບັດຕາມລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້. |

**ໝາຍເຫດ:**

ໄມ້ປູກທີ່ໃຫ້ສົ່ງອອກໄດ້ໃນທຸກຮູບແບບ ດັ່ງກ່າວນີ້ ແມ່ນໄດ້ປະຕິບັດ ຕາມມາດຕາ 36 ຂອງກົດໝາຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ດຳລັດວ່າດ້ວຍການສົ່ງເສີມການປູກໄມ້ເປັນສິນຄ້າ ເລກທີ 247/ລບ, ລົງວັນທີ 20 ສິງຫາ 2019 ແລະ ລະບຽບການອື່ນໆ ທີ່ຈັດຕັ້ງປະຕິບັດໃນແຕ່ລະໄລຍະ.

## ເອກະສານຊ້ອນທ້າຍ 2: ລາຍການຜະລິດຕະພັນໄມ້ທຳມະຊາດ ເພື່ອສົ່ງອອກ (ໄມ້ໃນບັນຊີ I, II ແລະ III)

| ລະຫັດເຄົ້າ Heading | ລະຫັດຍ່ອຍ Sub - Heading | ລາຍການຜະລິດຕະພັນໄມ້ Description | | ຂະໜາດບໍ່ກາຍ (ຊມ) Maximum size (Cm) | | |
|---|---|---|---|---|---|---|
| | | ພາສາລາວ 'Lao' | ພາສາອັງກິດ 'English' | ໜາ Thickness | ກ້ວາງ Width | ຍາວ Length |
| 44.01 | | 1. ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ | 1. Wooden briquettes and pellets | | | |
| | 4401.22.00<br>4401.31.00 | 1.1 ຂີ້ເລື່ອຍອັດແທ່ງ<br>1.2 ຂີ້ເລື່ອຍອັດເມັດ | 1.1 Wooden briquettes<br>1.2 Wooden pellets | -<br>- | -<br>- | -<br>- |
| 44.02 | 4402.90.90 | 2. ຜະລິດຕະພັນຖ່ານໄມ້ | 2. Wooden charcoal | | | |
| | | 2.1 ຖ່ານຂາວ<br>2.2 ຖ່ານອັດແທ່ງ ຫຼື ອັດເມັດຈາກຂີ້ເລື່ອຍ | 2.1 White charcoal<br>2.2 Sawdust charcoal | -<br>- | -<br>- | -<br>- |
| 64.14 | 3802.10.00 | 2.3 ຖ່ານຄາຣ໌ບອນທີ່ມີລັກສະນະກະຕຸ້ນໃຫ້ມີພາວະກຳມັນຕະພາບລັງສີ ຫຼື ຖ່ານກັ່ນຕອງດູດຊຶມ | 2.3 Activated carbon | - | - | - |

**ຖ່ານຂາວ** ແມ່ນຜະລິດຕະພັນຖ່ານຈາກໄມ້ຕິ້ວທີ່ຂຸດຄົ້ນຈາກສວນປູກ ຫຼື ເຂດປ່າຟື້ນຟູທີ່ອະນຸຍາດໃຫ້ຂຸດຄົ້ນຕາມລະບຽບການທີ່ກ່ຽວຂ້ອງ.

| ລະຫັດເຄົ້າ Heading | ລະຫັດຍ່ອຍ Sub - Heading | ພາສາລາວ 'Lao' | ພາສາອັງກິດ 'English' | ໜາ Thickness | ກ້ວາງ Width | ຍາວ Length |
|---|---|---|---|---|---|---|
| 44.09 | 4409.29.00 | 3. ຜະລິດຕະພັນໄມ້ປັກເກ້ ແລະ ໄມ້ປູພື້ນ | 3. Wooden parquet and interior flooring. | | | |
| | | 3.1. ຜະລິດຕະພັນໄມ້ປັກເກ້ | 3.1 Parquet | | | |
| | | 3.1.1 ໄມ້ປັກເກ້ຊິ້ນດຽວ | 3.1.1 Solid parquet | ≤ 2.5 | ≤ 20 | ≤ 100 |
| | | 3.1.2 ໄມ້ປັກເກ້ເຊື່ອມຕໍ່ປະສານ | 3.1.2 FJL parquet | ≤ 2.5 | ≤ 20 | ≤ 100 |
| | | 3.1.3 ໄມ້ປັກເກ້ໂມເສກ | 3.1.3 Mosaic parquet | ≤ 2.5 | ≤ 50 | ≤ 50 |
| | | 3.2 ຜະລິດຕະພັນໄມ້ປູພື້ນ | 3.2 Flooring | | | |
| | | 3.2.1 ໄມ້ປູພື້ນຊິ້ນດຽວ | 3.2.1 OPC flooring | ≤ 3 | ≤ 30 | - |
| | | 3.2.2 ໄມ້ປູພື້ນເຊື່ອມຕໍ່ຊິ້ນດຽວ | 3.2.2 UNI flooring | ≤ 3 | ≤ 40 | - |
| | | 3.2.3 ໄມ້ປູພື້ນຕໍ່ເຊື່ອມຕໍ່ປະສານ | 3.2.3 FJL flooring | ≤ 3 | ≤ 40 | - |
| | | 3.2.4 ໄມ້ປູພື້ນອັດເປັນຊັ້ນ | 3.2.4 Engineered flooring | ≤ 3 | ≤ 40 | - |
| | | 3.2.5 ໄມ້ແຜ່ນພື້ນເດັກກິງ | 3.2.5 Decking tile | ≤ 3 | ≤ 50 | ≤ 50 |
| | | 3.3 ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ | 3.3 Wall and ceiling panel | | | |
| | | 3.3.1 ໄມ້ເພດານແບບຮ່ອງຕົວວີ (V) | 3.3.1 V ceiling panel | ≤ 1.5 | ≤ 20 | ≤ 400 |
| | | 3.3.2 ໄມ້ເພດານແບບຕໍ່ເຊື່ອມປະສານ | 3.3.2 FJL ceiling panel | ≤ 1.5 | ≤ 20 | ≤ 400 |
| | | 3.3.3 ໄມ້ແອ້ມຝາ ແລະເພດານແບບອັດເປັນຊັ້ນ | 3.3.3 Engineering panel | ≤ 1.5 | ≤ 20 | ≤ 400 |
| | | 3.3.4 ໄມ້ແອ້ມຝາແບບມຸນ | 3.3.4. Logged panel | ≤ 3.5 | ≤ 20 | ≤ 400 |
| | | 3.4 ຜະລິດຕະພັນໄມ້ຕໍ່ເປັນເສັ້ນ | 3.4 Finger joint wood | ≤ 5 | ≤ 10 | ≤ 600 |

**ໄມ້ປັກເກ້, ໄມ້ປູພື້ນ, ໄມ້ແອ້ມຝາ - ເພດານ ແລະ ໄມ້ຕໍ່ເປັນເສັ້ນ** ແມ່ນຜະລິດຕະພັນໄມ້ທີ່ມີຂະໜາດສະເພາະ ແລະ ຕ້ອງມີຂະບວນການປຸງແຕ່ງ ດ້ວຍການອົບ, ຕັດຂະໜາດ, ອັດດ້ວຍກາວເປັນຊັ້ນ, ກົບລຽບສາມດ້ານ ແລະ ຂັດ. ມີບາງຮູບແບບແລ່ນຮ່ອງກັນມື່ນ.

**ຜະລິດຕະພັນໄມ້ ບາງຮູບແບບ ແມ່ນມີຄຳອະທິບາຍເພີ່ມເຕີມ ດັ່ງນີ້:**

1) **ຜະລິດຕະພັນໄມ້ປູພື້ນເຊື່ອມຕໍ່ປະສານ** ນຳໃຊ້ໄມ້ຫຼາຍເສັ້ນມາເຊື່ອມຕໍ່ເຂົ້າກັນດ້ວຍກາວໃຫ້ກາຍເປັນເສັ້ນຍາວ, ຊຶ່ງມີຂະບວນການປຸງແຕ່ງ ເຊັ່ນ: ອົບ, ຕັດຂະໜາດ, ປາດເດືອຍ, ຕິດກາວເຊື່ອມຕໍ່ເຂົ້າກັນເປັນເສັ້ນດຽວ ແລະ ອັດເປັນແຜ່ນຕາມຂະໜາດທີ່ໄດ້ກຳນົດໄວ້, ກົບລຽບສາມດ້ານ, ຂັດ, ແລ່ນຫລົ້ມ ແລະ ຮ່ອງ ຫຼື ບໍ່ແລ່ນຫລົ້ມ ແລະ ຮ່ອງ, ລົງສີ ຫຼື ບໍ່ລົງສີ.

2) **ໄມ້ປູພື້ນແບບອັດເປັນຊັ້ນ** ການນຳເອົາແຜ່ນໄມ້ມາຕິດເຂົ້າກັນດ້ວຍກາວເປັນ 2 ຊັ້ນ ຫຼື 3 ຊັ້ນໜີບເຂົ້າກັນດ້ວຍເຄື່ອງຈັກອັດແຮງ. ໜ້າດ້ານເທິງໃຊ້ໄມ້ທີ່ມີຄຸນນະພາບດີ ແລະ ສວຍງາມຕິດໃສ່, ຊຶ່ງຜ່ານຂະບວນການປຸງແຕ່ງ ເຊັ່ນ: ອົບ, ຊອຍ, ຕັດຂະໜາດ, ປາດເດືອຍ ຫຼື ບໍ່ປາດເດືອຍ ແລະ ອັດເປັນແຜ່ນຕາມຂະໜາດທີ່ໄດ້ກຳນົດໄວ້, ກົບລຽບສາມດ້ານ, ຂັດ, ແລ່ນຫລົ້ມ ແລະ ຮ່ອງ ຫຼື ບໍ່ແລ່ນ ຫລົ້ມ ແລະ ຮ່ອງ.

| | | | | | | |
|---|---|---|---|---|---|---|
| | | **4. ຜະລິດຕະພັນໄມ້ອັດ** | **4. Plywood** | | | |
| 44.10 | 4410.11.00 | 4.1 ໄມ້ອັດຈາກຂີ້ເລື່ອຍ ແລະ ຂີ້ກົບ | 4.1 Particle board | ≤ 5 | ≤ 122 | ≤ 244 |
| 44.11 | 4411.00.00 | 4.2 ໄມ້ອັດຈາກເສດໄມ້ບົດ<br>4.3 ໄມ້ອັດຈາກໃຍໄມ້ | 4.2 MDF board<br>4.3 Fibre board | ≤ 5<br>- | ≤ 122<br>- | ≤ 244<br>- |
| 44.12 | 4412.99.00<br>4412.94.00<br>4412.94.00<br><br>4412.99.00 | 4.4 ໄມ້ອັດຈາກໄມ້ປອກ<br>4.5 ໄມ້ອັດບ໊ອກບອດ<br>4.6 ໄມ້ອັດປະສານ, ໄມ້ອັດເຊື່ອມຕໍ່ປະສານ<br><br>4.7 ໄມ້ອັດປະສານສຳລັບໜ້າໂຕະ | 4.4 Plywood from veneer<br>4.5 Block board<br>4.6 Laminated Board, FJL board<br>4.7 Laminated board for table top | ≤ 5<br>≤ 5<br>≤ 5<br><br>≤ 5 | ≤ 122<br>≤ 122<br>≤ 122<br><br>≤ 100 | ≤ 244<br>≤ 244<br>≤ 244<br><br>≤ 600 |
| | | **5. ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້** | **5. Wooden handle products** | | | |
| 44.14 | 4414.00.00 | 5.1 ຂອບສຳລັບແຕ້ມຮູບ, ຂອບຮູບ, ຂອບແວ່ນ | 5.1 Wooden frames for paintings, photographs and mirrors | - | - | - |
| 44.15 | 4415.00.00 | 5.2 ຫີບ, ກັບ, ລັງ, ຖັງ ແລະ ສິ່ງຫຸ້ມຫໍ່ຄ້າຍຄຽງ, ແກນມ້ວນສາຍກາບ ທີ່ເຮັດດ້ວຍໄມ້ | 5.2 Packing cases, boxes, creates, drums, and similar packing, wood cable drums. | - | - | - |
| | 4415.10.00 | 5.2.1 ຫີບ, ຫີບນ້ອຍ, ຫີບໂປ່ງ, ຖັງກົມ (ສຳລັບບັນຈຸສິ່ງຂອງ) | 5.2.1 Cases, boxes, crates, cable | - | - | - |
| | 4415.20.00 | 5.2.2 ແຜ່ນຖາດ, ຖາດ-ຫີບ ແລະ ຖາດໃສ່ຂອງອື່ນໆ ທີ່ໃຊ້ສຳລັບຮອງ ແລະ ເຄື່ອນຍ້າຍສິນຄ້າ | 5.2.2 Pallets, box pallets and other load boards (Wooden tray) | - | - | - |
| 44.16 | <br>4416.00.10<br>4416.00.90 | 5.3 ອ່າງ, ຖັງເຮັດດ້ວຍໄມ້<br>5.3.1 ຖັງ<br>5.3.2 ອ່າງ | 5.3 Wooden barrels, staves<br>5.3.1 staves<br>5.3.2 barrels | <br>-<br>- | <br>-<br>- | <br>-<br>- |
| 44.17 | <br>4417.00.90<br><br>4417.00.10 | 5.4 ດ້າມເຄື່ອງມືທີ່ເຮັດດ້ວຍໄມ້<br>5.4.1 ດ້າມຟອຍ ຫຼື ແປງ ແລະ ອື່ນໆ ຮັບໃຊ້ການຜະລິດ (ເສັ້ນຜ່າໃຈກາງບໍ່ເກີນ 4 ຊມ)<br>5.4.2 ຮູບຫຸ່ນເກີບບູດ, ສົ້ນເກີບ | 5.4 Tools, tool handles of wood<br>5.4.1 Tool handles, broom or brush bodies (Dimension ≤ 4 Cm)<br>5.4.2 Handles, boot or shoe lasts of wood | <br>-<br><br>- | <br>-<br><br>- | <br>-<br><br>- |
| | | **6. ຜະລິດຕະພັນໄມ້ປະກອບໃນອາຄານ** | **6. Builders' joinery and carpentry of wood** | | | |
| 44.18 | 4418.10.00 | **6.1 ຊຸດປ່ອງຢ້ຽມ**<br>6.1.1 ວົງກົບປ່ອງຢ້ຽມສຳເລັດຮູບ (ຖອດຊິ້ນສ່ວນ ຫຼື ບໍ່ຖອດ)<br>6.1.2 ບານປ່ອງຢ້ຽມ ສຳເລັດຮູບ | **6.1 Windows**<br>6.1.1 Window frames (knock-down)<br>6.1.2 Window | <br>≤ 8<br><br>≤ 3.5 | <br>≤ 12<br><br>≤100 | <br>≤ 250<br><br>≤ 250 |
| | 4418.20.00 | **6.2 ຊຸດປະຕູ**<br>6.2.1 ວົງກົບປະຕູສຳເລັດຮູບ (ຖອດຊິ້ນສ່ວນ ຫຼື ບໍ່ຖອດ)<br>6.2.2 ບານປະຕູ ສຳເລັດຮູບ<br>6.2.3 ບານຕູ້ເຮືອນຄົວ | **6.2 Doors**<br>6.2.1 Door frames (knock-down)<br>6.2.2 Doors<br>6.2.3 Kitchen doors | <br>≤ 10<br>≤ 4.5<br>≤ 3 | <br>≤ 20<br>≤100<br>≤ 50 | <br>≤ 250<br>≤ 250<br>≤ 80 |
| | 4418.50.00 | **6.3 ແຜ່ນໄມ້ມຸງຫຼັງຄາ** | **6.3 Wooden shingles** | ≤ 2.5 | ≤ 20 | ≤ 50 |
| | 4418.71.00 | **6.4 ແຜ່ນໄມ້ຮົ້ວ** | **6.4 Wooden fences** | ≤ 2.5 | ≤ 15 | ≤ 200 |
| | 4418.72.00 | **6.5 ແຜ່ນໄມ້ປະກອບແບບລາຍໃນເສກ** | **6.5 Assembled flooring panel for mosaic floor** | ≤ 3 | ≤150 | ≤ 150 |

| | | | | | | |
|---|---|---|---|---|---|---|
| | 4418.72.00 | **6.6 ຜະລິດຕະພັນໄມ້ຂອບອັດເປັນຊັ້ນ** | **6.6 Multilayer scantlings** | ≤ 9 | ≤ 9 | ≤ 450 |
| | | **6.7 ຜະລິດຕະພັນໄມ້ຂອບອັດເປັນຊັ້ນ** | **6.6 Multilayer scantlings** | ≤ 3 | ≤ 12 | ≤ 200 |
| | | **6.8 ຊຸດຂັ້ນໄດ**<br>6.8.1 ແປ້ນຂັ້ນໄດຕົວນອນ<br>6.8.2 ແປ້ນຂັ້ນໄດຕົວຕັ້ງ<br>6.8.3 ແມ່ຂັ້ນໄດ | **6.8 Set of staircases**<br>6.8.1 Horizontal stair board<br>6.8.2 Vertical stair board<br>6.8.3 Staircase | ≤ 3.5<br>≤ 2.2<br>≤ 5 | ≤ 30<br>≤ 22<br>≤ 20 | ≤ 200<br>≤ 200<br>≤ 400 |
| | | **6.9 ຜະລິດຕະພັນໄມ້ລູກຕົ່ງ**<br>6.9.1 ລູກຕົ່ງຮູບຊົງກົມ (ໜ້າຕ້າງ ≤15 ຊມ) | **6.9 Balustrades timber products**<br>6.9.1 Round balustrade (Diameter ≤15 Cm) | - | - | ≤ 120 |
| | | 6.9.2 ລູກຕົ່ງຮູບຊົງສີ່ຫຼ່ຽມ | 6.9.2 Square balustrade | ≤ 15 | ≤ 15 | ≤ 120 |

ຜະລິດຕະພັນໄມ້ປະກອບໃນອາຄານ ຕ້ອງເປັນຜະລິດຕະພັນໄມ້ສຳເລັດຮູບ ທີ່ສາມາດນຳໃຊ້ໄດ້ເລີຍ, ສາມາດປະກອບເຂົ້າ ແລະ ແຍກອອກຈາກກັນໄດ້ທັນທີ (Knock-down) ເພື່ອສະດວກໃນການຂົນສົ່ງ, ແຕ່ຕ້ອງຄົບເປັນຊຸດ ຫຼື ເປັນໜ່ວຍ ເຊັ່ນ: ຊຸດປ່ອງຢ້ຽມ, ຊຸດປະຕູ ແລະ ອື່ນໆ. ການສົ່ງອອກຕ້ອງໄດ້ປຸງແຕ່ງຕາມຮູບແບບຂອງຜະລິດຕະພັນຢ່າງໜ້ອຍຕ້ອງໄດ້ຜ່ານຂັ້ນຕອນຂອງການ ເລື່ອຍ, ຕັດຂະໜາດ, ອົບ, ກົບລຽບ ແລະ ມີຂະໜາດທີ່ກຳນົດຂ້າງເທິງ.

1) **ຊຸດປະຕູ ແລະ ປ່ອງຢ້ຽມສຳເລັດຮູບ** ແມ່ນຜະລິດຕະພັນໄມ້ແບບເສັ້ນດຽວ ຫຼື ອັດປະສານ ຊຶ່ງຕ້ອງຜ່ານຂະບວນການປຸງແຕ່ງເຊັ່ນ: ເລື່ອຍ, ຕັດຂະໜາດ, ອົບ, ກົບລຽບ, ຕັດມຸມສາກທົ່ວວົງກົບ ຕົວຜູ້ ແລະ ຕົວແມ່ ທີ່ສາມາດປະກອບເປັນຊຸດ. ການສົ່ງອອກສາມາດແຍກສົ່ງອອກເປັນວົງກົບປ່ອງຢ້ຽມ ຫຼື ວົງກົບປະຕູ ຫຼື ບານປ່ອງຢ້ຽມ ຫຼື ບານປະຕູສຳເລັດຮູບ ກໍ່ໄດ້.
2) **ວົງກົບປະຕູ ແລະ ປ່ອງຢ້ຽມ** ສົ່ງອອກໄດ້ໃນຮູບແບບທີ່ແລ່ນຮ່ອງບັງໃບ ຫຼື ບໍ່ແລ່ນຮ່ອງບັງໃບ ກໍ່ໄດ້, ແຕ່ຕ້ອງຜ່ານຂະບວນການປຸງແຕ່ງ ແລະ ຂະໜາດທີ່ກຳນົດຂ້າງເທິງ.
3) **ແປ້ນຂັ້ນໄດຕົວນອນ, ຕົວຕັ້ງ ແລະ ແມ່ຂັ້ນໄດ** ແມ່ນຜະລິດຕະພັນໄມ້ ທີ່ໄດ້ຜ່ານຂະບວນການປຸງແຕ່ງ ເຊັ່ນ: ເລື່ອຍ, ຕັດຂະໜາດ, ອົບ, ກົບລຽບ ແລະ ລົບຫຼ່ຽມ.
4) **ລູກຕົ່ງ** ແມ່ນຜະລິດຕະພັນໄມ້ ທີ່ມີຮູບລັກສະນະຊົງກົມ ແລະ ຮູບຊົງຫລ່ຽມ ຕາມຂະໜາດທີ່ກຳນົດ.
   - ລູກຕົ່ງ ຮູບຊົງກົມ ແມ່ນຜະລິດຕະພັນໄມ້ ທີ່ຜ່ານຂະບວນການປຸງແຕ່ງ ເຊັ່ນ: ເລື່ອຍ, ຕັດຂະໜາດ, ອົບ, ກົບລຽບ ແລະ ຊ່ຽນ ຕາມຂະໜາດທີ່ກຳນົດ.
   - ລູກຕົ່ງ ຮູບຊົງຫຼ່ຽມ ແມ່ນຜະລິດຕະພັນໄມ້ ທີ່ຜ່ານຂະບວນການປຸງແຕ່ງ ເຊັ່ນ: ເລື່ອຍ, ຕັດຂະໜາດ, ອົບ, ກົບລຽບ, ຊ່ຽນ, ແລ່ນໂຮເຕີ ຕາມຂະໜາດທີ່ກຳນົດ.

| | | | | | | |
|---|---|---|---|---|---|---|
| | | **7. ເຄື່ອງຫັດຖະກຳ ທີ່ເຮັດດ້ວຍໄມ້** | **7. Other articles of wood** | | | |
| 44.19 | 4419.00.00 | **7.1 ຜະລິດຕະພັນໄມ້ທີ່ໃຊ້ເທິງໂຕະອາຫານ, ເຮືອນຄົວ ເຊັ່ນ:** ຖ້ວຍ, ຊາມ, ຖາດ, ໂອ່ງ, ຈານ, ໄມ້ກະດ້າມ, ບ່ວງ, ຊ້ອມ, ດ້າມມີດ. | 7.1 Tableware and kitchenware of wood | | | |
| | | **7.2 ຂຽງ**<br>7.2.1 ຂຽງສີ່ຫຼ່ຽມຍາວ<br>7.2.2 ຂຽງໜ້າມົນ (ໜ້າຕ້າງ ≤ 30 ຊມ, ຄວາມໜາ ≤ 5 ຊມ)<br>7.2.3 ຂຽງສີ່ລ່ຽມມົນທົນ | **7.2 Cutting boards**<br>7.2.1 Square cutting boards<br>7.2.2 Round cutting boards<br>7.2.3 Square cutting board | ≤ 5<br>≤ 5<br>≤ 5 | ≤ 30<br>-<br>≤ 30 | ≤ 50<br>-<br>≤ 30 |
| 44.20 | 4420.10.00 | **7.3 ຜະລິດຕະພັນເຄື່ອງຫັດຖະກຳໄມ້ ແລະ ເຄື່ອງໄມ້ແກະສະຫຼັກ, ແຜ່ນໄມ້ແກະສະຫຼັກ, ແຜ່ນລາຍປາດສະລຸ** | **7.3 Wooden handicrafts and carving products, carving boards** | | | |
| | | 7.3.1 ແຜ່ນໄມ້ແກະສະຫລັກແປັນແຜ່ນດຽວ (ແກະສະຫລັກ ແລະ ຄວັດ 70%) | 7.3.1 Wooden board Carving products (Carving ≥ 70%) | ≤ 5 | - | - |

| | | | | | | |
|---|---|---|---|---|---|---|
| | | 7.3.2 ຕໍໄມ້, ປຸດໄມ້ ແກະສະຫຼັກ ທີ່ມີການຈັກ, ຄວັດ ແລະ ແກະສະຫຼັກ ≥ 70% ຂຶ້ນໄປ. | 7.3.2 Wooden spur carving or handicraft (Carving or handicraft ≥ 70%) | - | - | - |
| | | 7.3.3 ໄມ້ແກະສະຫຼັກ ຫຼື ຄວັດ ທີ່ມີການ ແກະສະຫຼັກ ຫຼື ຄວັດ ≥ 70% ຂຶ້ນໄປ | 7.3.3 Wooden carving or handicraft (Carving or handicraft ≥ 70%) | - | - | - |
| 44.21 | 4421.10.00 | 7.4 ຜະລິດຕະພັນຂໍແກະເສື້ອ | 7.4 Wooden clothes hangers | - | - | - |
| | 4421.90.10 | 7.5 ຜະລິດຕະພັນແກນ, ຫຼອດ, ກະສວຍ, ຫຼອດດ້າຍຫຍິບຜ້າ | 7.5 Cops and bobbins, sewing thread reels | - | - | - |
| | 4421.90.20 | 7.6 ໄມ້ຂີດໄຟ | 7.6 Match splints | - | - | - |
| | 4421.90.94 | 7.7 ໄມ້ຈີ້ມແຂ້ວ | 7.7 Toothpicks | - | - | - |
| | 4421.90.99 | 7.8 ລູກປັດສຳລັບນັກບວດ, ໄມ້ກ້ານສໍ (ລະຫັດ 44.08 "4408.90.00; 4408.90.90 & 4408.39) | 7.8 Prayer beads, pencils | - | - | - |
| | | 7.9 ເຄື່ອງດົນຕີທີ່ເຮັດດ້ວຍໄມ້ | 7.9 Musical instruments of wood | - | - | - |
| 94.01 | | **8. ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້** | **8. Wooden furniture** | | | |
| | 9401.61.00 | 8.1 ສະໂລ່ງໄມ້, ສະໂລ່ງໄມ້ຫຸ້ມເບາະ ສຳເລັດຮູບທຸກຊະນິດ. | 8.1 Wooden sofa | - | - | - |
| | 9401.61.00 | 8.2 ຕັ່ງໄມ້, ຕັ່ງໄມ້ຫຸ້ມເບາະ ສຳເລັດຮູບທຸກຊະນິດ ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ | 8.2 Wooden chairs (Fixed or Knock-down) | - | - | - |
| 94.03 | 9403.60.10 | 8.3 ໂຕະໄມ້ສຳເລັດຮູບ | 8.3 Wooden table (Fixed or Knock-down) | | | |
| | 9403.60.10 | 8.3.1 ໂຕະໄມ້ທຸກຊະນິດສຳເລັດຮູບ ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ | 8.3.1 Wooden tables (Fixed or Knock-down) | - | - | - |
| | 9403.60.10 | 8.3.2 ໂຕະໜ້າມົນໄມ້ແຜ່ນດຽວສຳເລັດຮູບ (ເສັ້ນຜ່າໃຈກາງນ້ອຍກວ່າ ຫຼື ເທົ່າກັບ 120 ຊມ) | 8.3.2 Wooden round table from natural timber (diameter must be 120 cm) | 10 | - | - |
| | 9403.00.00 | 8.4 ຕູ້ໄມ້ທຸກຊະນິດສຳເລັດຮູບ ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ | 8.4 Wooden cabinets (Fixed or Knock-down) | - | - | - |
| | 9403.30.00 | 8.5 ຕຽງໄມ້ສຳເລັດຮູບທຸກຊະນິດ ສາມາດແຍກອອກ ຫຼື ປະກອບເຂົ້າກັນໄດ້ທັນທີ<br>• ໄມ້ປູພື້ນຕຽງນອນ<br>• ຂອບຕຽງນອນ, ຂາງຕຽງ, ຫົວຕຽງ, ຕີນຕຽງ<br>• ເສົາຕີນຕຽງ<br>• ເສົາຫົວຕຽງ | 8.5 Wooden Bed (Fixed or Knock-down)<br>• -<br>• -<br>• -<br>• - | <br>≤ 2.5<br>≤ 3<br>≤ 12<br>≤ 12 | <br>≤ 20<br>≤ 30<br>≤ 12<br>≤ 12 | <br>≤ 200<br>≤ 200<br>≤ 60<br>≤ 120 |
| | 9403.40.00 | 8.6 ເຄື່ອງຕົບແຕ່ງອື່ນໆ ທີ່ເປັນເຟີນີເຈີເຮັດດ້ວຍໄມ້ | 8.6 Decorative and furniture of wood | | | |
| | 9903.50.00 | 8.6.1 ເຄື່ອງເຟີນີເຈີໃຊ້ໃນຫ້ອງການ | 8.6.1 Furniture of a kind used in office | - | - | - |
| | | 8.6.2 ເຄື່ອງເຟີນີເຈີທີ່ໃຊ້ໃນເຮືອນຄົວ | 8.6.2 Furniture of a kind used in kitchen | - | - | - |
| | | 8.6.3 ເຄື່ອງເຟີນີເຈີໃຊ້ໃນຫ້ອງນອນ | 8.6.3 Furniture of a kind used in bedroom | - | - | - |
| | | 8.7 ຜະລິດຕະພັນເຟີນີເຈີຈາກຕໍໄມ້ສຳເລັດຮູບ | 8.7 Furniture of wooden stump | - | - | - |
| | | 8.8 ໂຕະໄມ້ທຳມະຊາດເປັນແຜ່ນດຽວສຳເລັດຮູບ | 8.8 Finished wooden table of a big piece of timber | 10 | 140 | 400 |
| | | 8.9 ຜະລິດຕະພັນໂລງສົບສຳເລັດຮູບ | 8.9 Wooden Coffin | - | - | - |

ລາຍການ ຜະລິດຕະພັນໄມ້ທຳມະຊາດ ເພື່ອສົ່ງອອກ (ໄມ້ໃນບັນຊີ I, II ແລະ III) ແມ່ນຜະລິດຕະພັນໄມ້ສຳເລັດຮູບ ທີ່ປະກອບດ້ວຍຫຼາຍຊະນິດ ແລະ ຫຼາຍຮູບແບບ ທີ່ສາມາດນຳໃຊ້ໄດ້ເລີຍ ແລະ ສາມາດສົ່ງອອກໃນຮູບແບບປະກອບເປັນຊຸດສຳເລັດຮູບ ຫຼື ແຍກເປັນຊິ້ນສ່ວນ (Knock-down) , ແຕ່ຕ້ອງຜ່ານຂະບວນການປຸງແຕ່ງ ເຊັ່ນ: ເລື່ອຍ ຫຼື ຊອຍ, ອົບ ຫຼື ຕາກແດດ, ຕັດຂະໜາດ, ກົບລຽບ ແລະ ເຈາະຮູ ຕາມຮູບແບບຂອງເຟີນີເຈີແຕ່ລະຊະນິດ ເຊັ່ນ: ໂຕະ, ຕັ່ງ, ຕູ້, ຕຽງ ແລະ ອື່ນໆ.

**ເອກະສານຊ້ອນທ້າຍ 3: ລາຍການຜະລິດຕະພັນຫວາຍ ແລະ ໄມ້ປ່ອງ ເພື່ອສົ່ງອອກ**

| ລະຫັດເຄົ້າ Heading | ລະຫັດຍ່ອຍ Sub-Heading | ລາຍການຜະລິດຕະພັນຫວາຍ ແລະ ໄມ້ປ່ອງ "List of Rattan and Bamboo products" | |
|---|---|---|---|
| | | ພາສາລາວ 'Lao' | ພາສາອັງກິດ 'English' |
| 94.03 | 9403.81.00 | 1 .ຜະລິດຕະພັນຫວາຍ ແລະ ໄມ້ປ່ອງ | 1. Bamboo and rattan products |
| 94.03 | | **1.1 ຜະລິດຕະພັນຫວາຍ**<br>1.1.1 ເຄື່ອງເຟີນີເຈີເຮັດດ້ວຍຫວາຍ<br>1.1.2 ເຄື່ອງຈັກສານເຮັດດ້ວຍຫວາຍ<br>1.1.3 ຜະລິດຕະພັນຫວາຍສຳເລັດຮູບ<br>1.1.4 ຜະລິດຕະພັນຫວາຍເຄິ່ງສຳເລັດຮູບ | **1.1 Rattan products**<br>1.1.1 Rattan furniture<br>1.1.2 Rattan Plaiting products<br>1.1.3 finished rattan product<br>1.1.4 Semi-finished rattan product |
| | | **1.2 ຜະລິດຕະພັນໄມ້ປ່ອງ**<br>1.2.1 ເຄື່ອງເຟີນີເຈີ ແລະ ເຄື່ອງໃຊ້ສອຍເຮັດດ້ວຍໄມ້ປ່ອງ<br>1.2.2 ເຄື່ອງຈັກສານເຮັດດ້ວຍໄມ້ປ່ອງ<br>1.2.3 ຜະລິດຕະພັນໄມ້ປ່ອງອື່ນໆ.<br>1.2.4 ໄມ້ຈ້າ | **1.2 Bamboo products**<br>1.2.1 Furniture and accessories made from bamboo<br>1.2.2 Bamboo Plaiting Products<br>1.2.3 Bamboo Products<br>1.2.4 Small bamboo |

1) ຜະລິດຕະພັນຫວາຍ ແມ່ນສົ່ງອອກໄດ້ສະເພາະຫວາຍສຳເລັດຮູບທີ່ນຳໃຊ້ໄດ້ເລີຍ ແລະ ຫວາຍເຄິ່ງສຳເລັດຮູບ.
2) ຫວາຍເຄິ່ງສຳເລັດຮູບ ແມ່ນຫວາຍທີ່ຮີດເປັນເສັ້ນ ແລະ ຊິ້ນສ່ວນຂອງຫວາຍສຳເລັດຮູບ ທີ່ຍັງບໍ່ສາມາດນຳໃຊ້ໄດ້ເລີຍ ຕ້ອງໄດ້ປະກອບກັບຊິ້ນສ່ວນອື່ນຕື່ມ ຈຶ່ງປະກອບເປັນຊຸດສຳເລັດຮູບ ທີ່ນຳໃຊ້ໄດ້ເລີຍ.

## ເອກະສານຊ້ອນທ້າຍ 4: ລາຍການຜະລິດຕະພັນໄມ້ ທຳມະຊາດ ເພື່ອສົ່ງອອກ (ສະເພາະ ໄມ້ໃນບັນຊີ II ແລະ III ເທົ່ານັ້ນ)

| ລະຫັດເຄົ້າ Heading | ລາຍການຜະລິດຕະພັນ: Products | | ຂະໜາດ (ຊມ) Size (Cm) | | |
|---|---|---|---|---|---|
| | ຊື່ເປັນພາສາລາວ | English | ໜາ/ Thick | ກ້ວາງ/Wide | ຍາວ/Length |
| 4408 | **1. ໄມ້ປອກ/ໄມ້ຝານ** | 1. Veneer, Slicing board | | | |
| | - ໄມ້ປອກ | - Veneer | 0.6 | 150 | 300 |
| | - ໄມ້ຝານ | - Slicing board | 0.6 | 150 | 300 |
| 4418.1 | **2. ໄມ້ສຳລັບກໍ່ສ້າງ** | **2. Builder's Carpentry and Construction** | | | |
| | 2.1. ໄມ້ໂຄງຫລັງຄາ | 2.1. Roof structure Wooden roof | | | |
| | • ໄມ້ອົກໄກ່ (ໄມ້ແປ) | • - | 5 | 20 | 800 |
| | • ໄມ້ໂຄງເພດານ | • Ceiling frame | 5 | 10 | 800 |
| | • ໄມ້ຂ້າວ | • Roof beams | 5 | 10 | 800 |
| | • ໄມ້ສີຢົວ | • - | 5 | 15 | 800 |
| | • ໄມ້ຂັດແປ | • Struts | 5 | 10 | 800 |
| | • ໄມ້ເສົາດັ້ງ | • - | 5 | 15 | 800 |
| | • ໄມ້ປ້ານລົມ,ປ້ານຊາຍ | • - | 5 | 25 | 800 |
| | • ໄມ້ຂື່ | • - | 5 | 20 | 800 |
| | • ໄມ້ຄໍສອງ | • - | 5 | 20 | 800 |
| | 2.2. ໄມ້ເສົາ | 2.2. Column | 30 | 30 | 500 |
| | 2.3. ໄມ້ຂາງໜີບ | 2.3. Mounding | 5 | 20 | 800 |
| | 2.4. ໄມ້ແປ້ນພື້ນ | 2.4. Lumber | 3 | 30 | 800 |
| | 2.5. ແປ້ນແອ້ມ | 2.5. flooring | 2 | 20 | 800 |
| | 2.6. ໄມ້ຕົງ | 2.6. Rafter | 5 | 10 | 800 |
| | 2.7. ໄມ້ຂາງ | 2.7. Beam | 5 | 20 | 800 |
| 4418.1 | **3. ໄມ້ປະກອບໃນອາຄານ (ຊິ້ນສ່ວນ)** | 3. Builder's Carpentry and Joinery | | | |
| | 3.1. ປະຕູ | 3.1. Door | | | |
| | • ໄມ້ວົງກົບປະຕູ | • Door frame | 15 | 20 | 300 |
| | • ໄມ້ບານປະຕູ | • Panel of door | 5 | 150 | 300 |
| | • ໄມ້ຂອບບານປະຕູ | • Door Pa.Frame | 10 | 20 | 300 |
| | 3.2. ປ່ອງຢ້ຽມ (ໄມ້ຂອບປ່ອງຢ້ຽມ) | 3.2. Window | | | |
| | • ໄມ້ວົງກົບປ່ອງຢ້ຽມ | • Window frame | 15 | 20 | 300 |
| | • ໄມ້ບານປ່ອງຢ້ຽມ | • Window panel | 5 | 150 | 300 |
| | • ໄມ້ຂອບບານປ່ອງຢ້ຽມ | • Window Pa. Fr. | 10 | 20 | 300 |
| | 3.3. ລູກຕົງ | 3.3. Wood spiral stair | 20 | 20 | 150 |
| | 3.4. ໄມ້ຂອບ, ຄິ້ວ, ສາຍບົວ | 3.4. Molding | 3 | 15 | 650 |
| | 3.5. ແມ່ຂັ້ນໄດ | 3.5. Staircase | 10 | 30 | 600 |
| | 3.6. ລູກຂັ້ນໄດ | 3.6. Stair | 5 | 30 | 200 |
| | 3.7. ຮາວພະນັກ, ຮາວຂັ້ນໄດ | 3.7. Railing | 6 | 15 | 600 |
| | 3.8. ເຄື່ອງປະກອບ ອື່ນໆ | 3.8 Other | - | - | - |
| | **4. ຜະລິດຕະພັນໄມ້ເຄິ່ງສຳເລັດຮູບທີ່ມີຂະ ໜາດ ແລະ ຮູບຊົງຄ້າຍຄືເຄື່ອງເຟີນີເຈີສຳເລັດຮູບ** | **4. Semi-finished products have size and model like finished products** | | | |
| | 4.1 ຊຸດສະໂລງ ໄມ້ທຸກປະເພດ | | | | |
| 9401.1 | • ຂາລ່ຽມ | 4.1 Sofas | | | |
| | • ຂາງ | • Legs | 15 | 15 | 100 |

| | | | | | |
|---|---|---|---|---|---|
| | • ແປ້ນໜ້າ | • Beams | 5 | 20 | 250 |
| | • ຊິ້ນສ່ວນປະກອບອື່ນໆ | • Boards | 5 | 65 | 250 |
| | | • All parts | - | - | - |
| 9403.1 | 4.2 ຊຸດໂຕະໄມ້ທຸກປະເພດ | 4.2 Set of Tables | | | |
| | • ຂາລ່ຽມ | • Legs (square) | 15 | 15 | 150 |
| | • ຂາກົມ | • Legs (round) | 20 | 20 | 150 |
| | • ຂາງ | • Beams | 5 | 15 | 250 |
| | • ແປ້ນໜ້າ | • Boards | 5 | 120 | 250 |
| | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - |
| 9401.1 | 4.3 ຊຸດຕັ່ງໄມ້ທຸກປະເພດ | 4.3 Chairs | | | |
| | • ຂາລ່ຽມ | • Legs (square) | 15 | 15 | 150 |
| | • ຂາກົມ | • Legs (round) | 20 | 20 | 150 |
| | • ຂາງ | • Beams | 5 | 15 | 250 |
| | • ແປ້ນໜ້າ | • Boards | 5 | 50 | 250 |
| | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - |
| 9403.1 | 4.4 ຊຸດຕູ້ໄມ້ທຸກປະເພດ | 4.4 Cabinets | | | |
| | • ຂາ | • Legs | 5 | 10 | 300 |
| | • ຂາງ, ໄມ້ເຊັນ | • Beams | 5 | 10 | 300 |
| | • ແປ້ນໜ້າ | • Boards | 4 | 60 | 300 |
| | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - |
| 9404.1 | 4.5 ຊຸດຕຽງໄມ້ທຸກປະເພດ | 4.5 Mattress | | | |
| | • ຂາຕຽງ | • Legs | 15 | 15 | 100 |
| | • ແປ້ນຂາຕຽງ | • Beams | 5 | 40 | 220 |
| | • ແປ້ນຫົວຕຽງ | • Boards | 5 | 60 | 220 |
| | • ຊິ້ນສ່ວນປະກອບອື່ນໆ | • All parts | - | - | - |
| | • ເຄື່ອງຕົບແຕ່ງ ທີ່ເປັນເຟີນິເຈີ ທີ່ເຮັດດ້ວຍໄມ້. | • Decorative at furniture of wood | - | - | - |
| | **5.ຜະລິດຕະພັນເຄິ່ງສຳເລັດຮູບທີ່ມີຂະໜາດ ແລະ ຮູບຊົງຄືໄມ້ປັກເກ້ ,ໄມ້ປະກອບຖັງລົດ** | 5. Semi-products have size and model like parquet and truck body construction | | | |
| | **5.1 ໄມ້ປັກເກ້ (ຈາກເສດໄມ້ໃນໂຮງເລື່ອຍ)** | **5.1 Parquet** | | | |
| | • ໄມ້ປັກເກປູພື້ນ ແລະ ປັກເກອື່ນໆ | • floorings | 5 | 15 | 120 |
| | • ໄມ້ປູພື້ນແບບຕໍ່ເສັ້ນ-ຕໍ່ແຜ່ນທຸກຊະນິດ | • Parquet flooring /random floorings | 5 | 20 | 650 |
| | • ໄມ້ປູພື້ນແບບໂມເສດ | • Mosaic parquet floorings | 5 | 50 | 50 |
| | **5.2 ໄມ້ປູພື້ນ** | **5.2 Wood flooring** | | | |
| | • ໄມ້ປູພື້ນແບບດ້ານເທິງມີຮ່ອງກັນມື່ນ. | • ULIN Decking | 5 | 20 | 650 |
| | • ໄມ້ປູພື້ນແບບໜ້າລຽບ | • FJL Floorings | 5 | 20 | 650 |
| | • ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງຮອບຕົວ | • ELO Decking | 5 | 20 | 650 |
| | • ໄມ້ປູພື້ນແບບມີລີ້ນ ແລະ ມີຮ່ອງປະສົມ | • Tongue and Grove flooring | 5 | 20 | 650 |
| | **5.3 ໄມ້ປະກອບຖັງລົດ** | **5.3 Truck body joinery** | | | |
| | • ໄມ້ຂາງລົດ | • Cross bearer | 10 | 15 | 250 |
| | • ແປ້ນປູພື້ນຖັງລົດ | • Truck's flooring | 5 | 15 | 650 |
| | • ຝາຂ້າງ | • Gate boards | 5 | 15 | 300 |

**ລາຍການຜະລິດຕະພັນໄມ້ ທຳມະຊາດ ເພື່ອສົ່ງອອກ (ສະເພາະ ໄມ້ໃນບັນຊີ II ແລະ III ເທົ່ານັ້ນ)**

ຜະລິດຕະພັນໄມ້ ທີ່ກຳນົດໃນເອກະສານຊ້ອນທ້າຍ 4 ຂ້າງເທິງນີ້ ແມ່ນລາຍການຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ (Semi-knock down) ທີ່ເພີ່ມເຂົ້າໃໝ່.

ຜະລິດຕະພັນໄມ້ເຫຼົ່ານີ້ ແມ່ນຜ່ານຂັ້ນຕອນຂອງການປຸງແຕ່ງເຊັ່ນ: ເລື່ອຍ, ອົບ ຫຼື ຕາກແດດ, ຕັດຂະໜາດ, ຂຶ້ນຮູບ, ປາດໂຄ້ງ, ແຕ່ບໍ່ສາມາດແຍກອອກ ແລະ ປະກອບເຂົ້າກັນໄດ້ທັນທີ (knock down) ຕາມການອອກແບບເປັນໜຶ່ງຊຸດ ຫຼື ໜຶ່ງຫຼັງ.

ຜະລິດຕະພັນໄມ້ທີ່ກຳນົດນີ້ ປະກອບມີ 5 ລາຍການ ຄື: ❶ ໄມ້ປອກ ແລະ ໄມ້ຝານ; ❷ ໄມ້ສຳເລັດການກໍ່ສ້າງ; ❸ ໄມ້ປະກອບໃນອາຄານ; ❹ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບອື່ນໆ ທີ່ມີຂະໜາດ ແລະ ຮູບຊົງຄ້າຍຄືເຄື່ອງເຟີນິເຈີສຳເລັດຮູບ ແລະ ❺ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ທີ່ມີຂະໜາດ ແລະ ຮູບຊົງຄ້າຍຄືໄມ້ປັກເກ້, ໄມ້ປູພື້ນ ແລະ ໄມ້ປະກອບຖັງລົດ.

**ໝາຍເຫດ:**

1) ຄວາມໝາຍຂອງ CITES (Convention on International Trade in Endangered Species of Wild Fauna and Flora) ກວມເອົາ ພືດ ຫຼື ສັດທີ່ໃກ້ສູນພັນ;

2) ສຳລັບລະຫັດສາລະບານພາສີ ຂອງຜະລິດຕະພັນໄມ້ ແຕ່ລະຊະນິດທີ່ກຳນົດ ອາດມີການຄາດເຄື່ອນ. ສະນັ້ນ, ຈຶ່ງສະເໜີໃຫ້ກົມພາສີ ຫຼື ເຈົ້າໜ້າທີ່ປະຈຳດ່ານ ພິຈາລະນາກຳນົດ ຫຼື ນຳໃຊ້ລະຫັດໃສ່ຜະລິດຕະພັນໄມ້ ທີ່ສົ່ງອອກ ຕາມລະບຽບການໃນແຕ່ລະໄລຍະ.

ຮູບພາບ 1: ລາຍການຜະລິດຕະພັນໄມ້ປູກ ເພື່ອສົ່ງອອກ



# ຮູບພາບ 2: ລາຍການຜະລິດຕະພັນໄມ້ ທຳມະຊາດ ເພື່ອສົ່ງອອກ (ໄມ້ໃນບັນຊີ I, II ແລະ III)

1 - 44.01 ຜະລິດຕະພັນຂີ້ເລື່ອຍອັດແທ່ງ ແລະ ອັດເມັດ

1.1- 4401.22.00 ຂີ້ເລື່ອຍອັດແທ່ງ




1.2 - 4401.31.00 ຂີ້ເລື່ອຍອັດເມັດ




2 - 44.02 – 4402.90.90 ຜະລິດຕະພັນຖ່ານຂາວ, ຖ່ານອັດແທ່ງຈາກຂີ້ເລື່ອຍ






2.3 ຖ່ານຄາຣ໌ບອນທີ່ມີລັກສະນະກະຕຸ້ນໃຫ້ມີພາວະກຳມັນຕະພາບລັງສີ ຫຼື ຖ່ານກັ່ນຕອງການດູດຊຶມ (ເພີ່ມເຂົ້າໃໝ່)




44.09 – 4409.29.00 - ຜະລິດຕະພັນໄມ້ປັກເກ້ ແລະ ໄມ້ປູພື້ນ

3.1 ຜະລິດຕະພັນໄມ້ປັກເກ້

3.1.1 - ໄມ້ປັກເກ້ເສັ້ນດຽວ







3.1.2 - ໄມ້ປັກເກ້ເຊື່ອມຕໍ່ປະສານ




3.1.3 - ໄມ້ປັກເກ້ໂມເສດ




3.2 - ຜະລິດຕະພັນໄມ້ປູພື້ນ



3.3 - ຜະລິດຕະພັນໄມ້ແອ້ມຝາ ແລະ ເພດານ







3.4 ຜະລິດຕະພັນໄມ້ຕໍ່ເປັນເສັ້ນ



4 - 44.10; 44.11; 44.12 ຜະລິດຕະພັນໄມ້ອັດ

4.1-44.10 ໄມ້ອັດຈາກຂີ້ເລື່ອຍ, ຂີ້ກົບ





4.2 & 4.3 - 44.11 – 4411.00.00 ໄມ້ອັດຈາກໄມ້ບົດ ແລະ ໃຍໄມ້





4.5 - 44.12 - 4412.94.00 ໄມ້ອັດບ໊ອກບອດ

4.4 - 4412.99.00 ໄມ້ອັດຈາກໄມ້ປອກ (Plywood from Veneer)





4.6 – 44.12 – 4412.94.00 ໄມ້ອັດປະສານ ,ໄມ້ອັດເຊື່ອມຕໍ່ປະສານ





5 - 44.14 ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້

5.1 - 4414.00.00 ຂອບສໍາລັບແຕ້ມຮູບ ແລະ ຂອບຮູບ, ຂອບແວ່ນ



5.2-4415.00 ຫີບ, ຖັງ, ລັງ, ກັບ, ແກນມ້ວນສາຍກາບ ແລະ ສິ່ງຫຸ້ມຫໍ່ຄ້າຍຄຽງທີ່ເຮັດດ້ວຍໄມ້



5.2.1-4415.10-ຫີບໂປ່ງ, ຫີບນ້ອຍ ແລະ ກັບສໍາລັບບັນຈຸສິ່ງຂອງ



5.2.2-4415.20.00 ແຜ່ນຖາດ ຖາດຫີບ ແລະ ຖາດໃສ່ຂອງອື່ນໆ , ທີ່ໃຊ້ສໍາລັບຮອງ ແລະ ເຄື່ອນຍ້າຍສິນຄ້າ



5.3.5.3.1-5.3.2: 44.16 ອ່າງຖັງເຮັດດ້ວຍໄມ້ ,



5.4-5.4.1-44.17-4417.00.90-4417.00.10 ດ້າມເຄື່ອງມືທີ່ເຮັດດ້ວຍໄມ້



5.4.2 – ຮູບຫຸ່ນເກີບບູດ ແລະ ສົ້ນເກີບ



| | |
|---|---|
| 6 - 44.18 ຜະລິດຕະພັນໄມ້ປະກອບໃນອາຄານ | |
| 6.1 - 4418.10.00 ຊຸດປ່ອງຢ້ຽມ | |
|  | |
| 6.2 - 4418.20.00 ຊຸດປະຕູ | 6.2.3- ບານຕູ້ເຮືອນຄົວ |
| <br> |  |
| 6.3 – 4418.50.00 ແຜ່ນໄມ້ມຸງຫຼັງຄາ | 6.4 – 4418.50.00 ແຜ່ນໄມ້ຮົ້ວ |
| <br> |  |
| 6.5 - 4418.71.00 ແຜ່ນໄມ້ປະກອບແບບລາຍໂມເສດ | 6.6 – 4418.72.00 ຜະລິດຕະພັນໄມ້ຂອບອັດເປັນຊິ້ນ |
|  |  |
| 6.7 - 4418.72.00 ຜະລິດຕະພັນໄມ້ບົວ | 6.8 – 6.8.1- 6.8.2 - 4418.72.00 ຊຸດຂັ້ນໄດແປ້ນຂັ້ນໄດຕົວ)<br>(ຕັ້ງ ແລະ ແປ້ນຂັ້ນໄດຕົວນອນ |





6.8.3 ແມ່ຂັ້ນໄດ



6.9 – 4418.72.00 ຜະລິດຕະພັນໄມ້ລູກຕັ້ງ

6.9.1 ລູກຕັ້ງຮູບຊົງກົມ



6.9.2 - ລູກຕັ້ງຮູບຊົງສີ່ຫຼ່ຽມ




7 - ເຄື່ອງຫັດຖະກຳ ທີ່ເຮັດດ້ວຍໄມ້

7.1 ຜະລິດຕະພັນໄມ້ທີ່ໃຊ້ເທິງໂຕະອາຫານ



7.2 - ຂຽງ



7.3.1 - 44.20 - 4420.10.00 - ຜະລິດຕະພັນເຄື່ອງຫັດຖະກຳໄມ້

7.3.1 ແຜ່ນໄມ້ແກະສະຫຼັກແປ້ນແຜ່ນດຽວ




7.3.2 ຕໍໄມ້, ປູດໄມ້ ແກະສະຫຼັກ





7.3.2 ໄມ້ແກະສະຫຼັກ




7.4 - 44.21 - 4421.10.00
ຜະລິດຕະພັນຂໍເກາະເສື້ອ



7.5-4421.90.1-ຜະລິດຕະພັນຫຼອດດ້າຍຫຍິບຜ້າ, ແກນ, ກະສວຍ



7.6 & 7.7- 4421.90.20 & 4421.90.94 –
ໄມ້ຂີດໄຟ, ໄມ້ຈິ້ມແຂ້ວ



7.8 - 4421.90.99; 4408.10.10 & 4408.39.10 ລູກປັດສໍາລັບນັກບວດໄມ້ກ້ານສໍ ,



7.9 - ເຄື່ອງດົນຕີທີ່ເຮັດດ້ວຍໄມ້



8 - 94.01 - ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້

8.1 - .9401.6100 - ສະໂລງໄມ້, ສະໂລງໄມ້ຫຸ້ມເບາະທຸກຊະນິດສໍາເລັດຮູບ.



8. 2- .9401.6100 - ຕັ່ງໄມ້, ຕັ່ງໄມ້ຫຸ້ມເບາະ
ທຸກຊະນິດສໍາເລັດຮູບ



8.3–9403–9403.60.10 ໂຕະໄມ້

8.3.1 ທຸກຊະນິດສໍາເລັດຮູບ



8.3.2 ໂຕະໜ້າມົນໄມ້ແຜ່ນດຽວ(120ຊມ≥ເສັ້ນຜ່າໃຈກາງ)



8.4 – 9403.60.10 - ຕູ້ໄມ້ທຸກຊະນິດສຳເລັດຮູບ



8.5 - 9403.60.10 - ຕຽງ ໄມ້ທຸກຊະນິດສຳເລັດຮູບ



8.6 – 9403.00.00 - ເຄື່ອງຕົບແຕ່ງອື່ນໆ ທີ່ເປັນເຟີນີເຈີ ດ້ວຍໄມ້

8.6.1 - 9403.30.00 - ເຄື່ອງເຟີນີເຈີທີ່ໃຊ້ໃນ



ຫ້ອງການ

8.6.2 - 9403.40.00 - ເຄື່ອງເຟີນີເຈີທີ່ໃຊ້ໃນເຮືອນຄົວ



8.6.3-9403.50.00 - ເຄື່ອງເຟີນີເຈີທີ່ໃຊ້ໃນຫ້ອງນອນ



9.7 ຜະລິດຕະພັນເຟີນີເຈີຈາກຕໍໄມ້ (ເພີ່ມເຂົ້າໃໝ່)





9.8 ໂຕະໄມ້ທຳມະຊາດແປ້ນແຜ່ນດຽວ (ເພີ່ມເຂົ້າໃໝ່)







9.9. ຜະລິດຕະພັນໂລງສົບສຳເລັດຮູບ









10. ຊິ້ນສ່ວນເຟີນີເຈີ













# ຮູບພາບ 3: ລາຍການຫວາຍ ແລະ ໄມ້ປ່ອງ ເພື່ອສົ່ງອອກ

1. ຜະລິດຕະພັນ ທີ່ເຮັດດ້ວຍຫວາຍ ແລະ ໄມ້ປ່ອງ

1.1 ຜະລິດຕະພັນຫວາຍ







1.2 ຜະລິດຕະພັນໄມ້ປ່ອງ ແລະ ໄມ້ຈ້າ

- ຜະລິດຕະພັນໄມ້ປ່ອງ






- ໄມ້ຈ້າ (ໄມ້ປ່ອງຂະໜາດນ້ອຍ)






## ຮູບພາບ 4: ລາຍການຜະລິດຕະພັນໄມ້ ທຳມະຊາດ ເພື່ອສົ່ງອອກ (ໄມ້ໃນບັນຊີ II ແລະ III)

1. ໄມ້ປອກ ແລະ ໄມ້ຝານ






2. ໄມ້ສຳລັບການກໍ່ສ້າງ








## 3. ໄມ້ປະກອບໃນອາຄານ






Figure 12 – Steel stud wall construction

5

## 4. ຜະລິດຕະພັນໄມ້ເຄິ່ງສຳເລັດຮູບອື່ນໆ

4.1. ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ທີ່ມີຂະໜາດ ແລະ ຮູບຊົງຄາຍຄືເຄື່ອງເຟີນີເຈີສຳເລັດຮູບ

4.2. ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ທີ່ມີຂະໜາດ ແລະ ຮູບຊົງຄ້າຍຄືໄມ້ປັກເກ້, ໄມ້ປູພື້ນ ແລະ ໄມ້ປະກອບຖັງລົດ





